ໃນວັນທີ 22 ກໍລະກົດ 2024, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປະຊາຊົນ ປະຕິວັດລາວ ໄດ້ສົ່ງ ໂທລະເລກເສົ້າສະຫຼົດໃຈ ເຖິງຄູ່ຮ່ວມຕໍາແໜ່ງ ຕໍ່ການມໍລະນະກໍາຂອງ ສະຫາຍ ຫງວຽນ ຟູ ຈ້ອງ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງ ພັກກອມມູນິດຫວຽດນາມ ໃນວັນທີ 19 ກໍລະ ກົດ 2024 ຜ່ານມາ, ໂດຍໂທລະເລກມີເນື້ອໃນດັ່ງນີ້:

ຄະນະພັກ, ຄະນະນໍາ ແລະ ພະນັກງານຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ປະຊາຊົນ ປະຕິວັດ ລາວ ທຸກຖ້ວນໜ້າ ຂໍສະແດງຄວາມເສົ້າສະຫຼົດໃຈ ແລະ ອາໄລອາວອນຢ່າງສຸດຊຶ້ງ ເມື່ອໄດ້ຮັບຂ່າວວ່າ ສະຫາຍ ຫງວຽນ ຟູ ຈ້ອງ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໄດ້ເຖິງ ແກ່ມໍລະນະກໍາ ໃນວັນທີ 19 ກໍລະກົດ 2024.

ການຈາກໄປຂອງ ສະຫາຍ ຫງວຽນ ຟູ ຈ້ອງ ເປັນການສູນເສຍຜູ້ນໍາທີ່ໂດດເດັ່ນ ໃນຍຸກສະໄໝໃໝ່, ຜູ້ສືບທອດພາລະກິດຂອງ ປະທານ ໂຮ່ຈິມິນ, ນັກກອມມູນິດປະຕິວັດທີ່ອົງອາດກ້າແກ່ນຂອງ ພັກ, ລັດຖະບານ ແລະ ປະຊາຊົນຫວຽດນາມ ອ້າຍນ້ອງ ເຊິ່ງໃນຕະຫຼອດຊີວິດເຄື່ອນໄຫວປະຕິວັດ ສະຫາຍ ໄດ້ອຸທິດຊີວິດ, ເຫື່ອແຮງ ແລະ ສະຕິປັນຍາເຂົ້າໃນວຽກງານແນວຄິດທິດສະດີ, ວຽກງານກໍ່ສ້າງພັກ ແລະ ພາລະກິດປ່ຽນແປງ ໃໝ່ຂອງ ພັກກອມມູນິດຫວຽດນາມ ອັນໄດ້ເຮັດໃຫ້ ປະເທດຫວຽດນາມ ມີການພັດທະນາຢ່າງບໍ່ຢຸດຢັ້ງ, ຖານະບົດບາດຂອງ ພັກ, ລັດ ສສ ຫວຽດນາມ ໄດ້ຮັບການຍົກສູງຂຶ້ນໃນເວທີພາກພື້ນ ແລະ ສາກົນ.

ການຈາກໄປຂອງ ສະຫາຍ ຫງວຽນ ຟູ ຈ້ອງ ເປັນການສູນເສຍ ເພື່ອນມິດ ສະຫາຍ ທີ່ໃກ້ຊິດທີ່ສຸດ ແລະ ສະໜິດສະໜົມທີ່ສຸດຂອງ ພັກ, ລັດຖະບານ ແລະ ປະຊາຊົນລາວ ບັນດາເຜົ່າພວກຂ້າພະເຈົ້າ, ສະຫາຍ ຫງວຽນ ຟູ ຈ້ອງ ໄດ້ປະກອບສ່ວນອັນໃຫຍ່ຫຼວງລໍ້າຄ່າ ແລະ ສໍາຄັນເຂົ້າໃນການເພີ່ມພູນຄູນສ້າງ ສາຍພົວພັນ ມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ຫວຽດນາມ-ລາວ ມາໂດຍຕະຫຼອດ.

ໃນເວລາອັນໂສກເສົ້າເສຍດາຍນີ້, ພວກຂ້າພະເຈົ້າ ຂໍແບ່ງເບົາຄວາມເສົ້າສະຫຼົດໃຈອັນສຸດຊຶ້ງ, ອາໄລ ອາວອນ ແລະ ຂໍແບ່ງປັນຄວາມທຸກໂສກມາຍັງ ສະຫາຍ ພ້ອມດ້ວຍຄະນະພັກ, ຄະນະນໍາ ແລະ ພະນັກງານຂອງ ຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ ພ້ອມດ້ວຍຄອບຄົວ ສະຫາຍ ຫງວຽນ ຟູຈ້ອງ ມານະໂອກາດນີ້ດ້ວຍ.

ພວກຂ້າພະເຈົ້າ ເຊື່ອໝັ້ນວ່າ ສະຫາຍ ພ້ອມດ້ວຍ ຄະນະພັກ, ຄະນະນໍາ ແລະ ພະນັກງານຂອງ ຄະນະ ພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ ຈະຫັນເອົາຄວາມທຸກໂສກເສຍດາຍນີ້ ໃຫ້ກາຍເປັນ ເຫງື່ອແຮງພະລັງແຮງ ໃນການປະກອບສ່ວນ ສ້າງສາພັດທະນາປະເທດຊາດ ແລະ ຈະພ້ອມກັບ ສະຫາຍ ສືບຕໍ່ ພາລະກິດຂອງເພິ່ນໃນການເສີມຂະຫຍາຍມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມື ຮອບດ້ານ ລາວ-ຫວຽດນາມ, ຫວຽດນາມ-ລາວ ໃຫ້ໝັ້ນຄົງ ແລະ ພັດທະນາຕະຫຼອດໄປ.

ນະຄອນຫຼວງວຽງຈັນ, ວັນທີ 22 ກໍລະກົດ 2024